ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 148 /ນຍ

ນະຄອນຫລວງວຽງຈັນ, ວັນທີ 10 . ພຶດສະພາ. 2007

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງ ກະຊວງກະສິກຳ ແລະ ປ່າໄມ້

– ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ6/5/2003.

– ອີງຕາມ ການຄົ້ນຄວ້ານຳສະເໜີຂອງທ່ານ ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 0422/ກປ.07, ລົງວັນທີ 23 ເມສາ 2007;

– ອີງຕາມການສະເໜີຂອງທ່ານລັດຖະມົນປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການ ປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ /ທປຄ, ລົງວັນທີ ພຶດສະພາ 2007.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງກະຊວງກະສິກຳ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງດັ່ງກ່າວ ແນໃສ່ຄຸ້ມຄອງລັດ ດ້ານຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຮັບການພັດທະນາ ຕາມແນວທາງນະໂຍບາຍຂອງພັກ ປະກອບສ່ວນເຮັດໃຫ້ເສດຖະກິດ-ສັງຄົມ ແຫ່ງຊາດ ໄດ້ຮັບການພັດທະນາທີ່ໝັ້ນຄົງ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງກະສິກຳ ແລະ ປ່າໄມ້ແມ່ນກົງຈັກຂອງລັດຖະບານ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ, ໃນການຄຸ້ມຄອງມະຫາພາກດ້ານກະສິກຳ ແລະ ປ່າໄມ້ ໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້

1) ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ຍຸດທະສາດ, ລະບຽບກົດໝາຍ ແລະ ນິຕິກຳຕ່າງໆ ຂອງພັກ ແລະ ລັດວາງອອກ ທີ່ພົວພັນເຖິງຂະແໜງກະສິກຳ ແລະ ປ່າໄມ້;

2) ຄົ້ນຄວ້າຮ່າງ ແລະ ນຳສະເໜີ ຕໍ່ລັດຖະບານ ເພື່ອພິຈາລະນາ ກ່ຽວກັບຍຸດທະສາດ, ແຜນແມ່ບົດ, ແຜນໄລຍະຍາວ ແລະ ມາດຕະຖານເຕັກນິກຕ່າງໆ ຂອງຂະແໜງກະສິກຳ ແລະ ປ່າໄມ້. ຊີ້ນຳ ແລະ ແນະນຳການຈັດຕັ້ງປະຕິບັດ ພາຍຫຼັງຖືກຮັບຮອງເອົາແລ້ວ;

3) ສະເໜີປັບປຸງ ຫລື ສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ຕໍ່ລັດຖະບານ ແລະ ຜັນຂະຫຍາຍເປັນຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ລະບຽບການ, ກຳນົດໝາຍເຕັກນິກ ແລະ ວິທີການຊຸກຍູ້ສົ່ງເສີມທີ່ແທດເໝາະ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເຮັດໃຫ້ການຜະລິດ ກະສິກຳ ແລະ ປ່າໄມ້ ຂະຫຍາຍຕົວຢ່າງມີ ປະສິດທິຜົນສູງ;

4) ຄຸ້ມຄອງ, ຊີ້ນຳ, ຊຸກຍູ້, ຕິດຕາມກວດກາ, ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ລະບຽບ, ກົດໝາຍ, ຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການກໍ່ຄືບັນດານິຕິກຳ ທີ່ລັດຖະບານ ແລະ ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ວາງອອກ ໃນແຕ່ລະໄລຍະ;

5) ຄົ້ນຄ້ວາ, ເລືອກເຟັ້ນ ແລະ ນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດເຕັກນິກ ແລະ ເຕັກໂນ ໂລຊີການຜະລິດທີ່ທັນສະໄໝ ແລະ ແທດເໝາະກັບເງື່ອນໄຂເສດຖະກິດ-ສັງຄົມຂອງ ສ.ປ.ປ. ລາວ ຈາກໃນລະດັບຂົງເຂດ ແລະ ລະດັບສາກົນ, ນັບທັງຊີວະເຕັກໂນໂລຊີ ໂດຍປະສົມປະສານກັບບົດຮຽນ ແລະ ປະສົບການຂອງທ້ອງຖິ່ນ ເພື່ອຍົກສູງຜະລິດຕະພາບການຜະລິດກະສິກຳ ແລະ ປ່າໄມ້ ໃຫ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຍືນຍົງ;

6) ຄຸ້ມຄອງການນຳເຂົ້າ, ການນຳໃຊ້, ຄຸນນະພາບ, ມາດຕະຖານເຕັກນິກການຜະລິດ ແລະ ປັດໄຈຊຸກຍູ້ການຜະລິດກະສິກຳເຊັ່ນ: ຝຸ່ນວິທະຍາສາດ, ຝຸ່ນຊີວະພາບ, ຢາປາບສັດຕູພືດ, ຢາປົວພະຍາດສັດ, ຢາວັກຊິນ, ອາຫານສັດ, ແນວພັນພືດ, ແນວພັນສັດ; ຄຸ້ມຄອງການເຄື່ອນຍ້າຍ ແລະ ປົກປັກຮັກສາພືດ, ສັດລ້ຽງ, ສັດນ້ຳ, ສັດປ່າ, ແນວພັນ, ຊີວະນາໆພັນ, ກົນຈັກ ແລະ ອຸປະກອນການຜະລິດກະສິກຳ ແລະ ປ່າໄມ້ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມລະບຽບກົດໝາຍ ໃນແຕ່ລະໄລຍະ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ;

7) ຊຸກຍູ້ສົ່ງເສີມການປູກຕົ້ນໄມ້ອຸດສາຫະກຳ ແລະ ປູກຕົ້ນໄມ້ໃຫ້ເປັນປ່າ; ຕິດຕາມ ແລະ ກວດກາ ວັດຖຸດິບຈາກກະສິກຳ ແລະ ປ່າໄມ້ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອ ປ້ອນເຂົ້າໂຮງງານອຸດສະຫະກຳປຸງແຕ່ງ;

8) ຄຸ້ມຄອງ, ກວດກາ ແລະ ຢັ້ງຢືນດ້ານສຸກຂະອະນາໄມ, ຄຸນນະພາບ ແລະ ມາດຕະຖານ ຂອງ ຜະລິດຕະພັນກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຕາມມາດຕະຖານຂອງພາຍໃນ, ຂອງອາຊຽນ ແລະ ຂອງສາກົນຕາມລະບຽບການທີ່ມີໃນແຕ່ລະໄລຍະ ໂດຍລົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງ ພາຍໃນ ແລະ ຕ່າງປະເທດ;

9) ຄົ້ນຄ້ວາ ແລະ ວາງມາດຕະການທີ່ເໝາະສົມເພື່ອສົ່ງເສີມການສ້າງເສດຖະກິດຄອບຄົວ, ການ ຈັດຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມການຜະລິດ, ສະຫະກອນກະເສດແບບໃໝ່, ຮູບແບບການ ຜະລິດຂ້ອງລັດ ແລະ ລວມໝູ່ ກໍຄືຂອງພາກສ່ວນເສດຖະກິດຕ່າງໆ ທີ່ຈະນຳໄປສູ່ລະບົບການ ຜະລິດແບບກະເສດສຸມ ທີ່ທັນສະໄໝ ແລະ ມີປະສິດທິຜົນສູງ;

10) ພົວພັນຮ່ວມມື ແລະ ຂົນຂວາຍຍາດແຍ່ງການຊ່ວຍເຫລືອ ແລະ ການລົງທຶນ ຈາກພາຍໃນ, ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ແຫລ່ງທຶນອື່ນໆບົນພື້ນຖານກົດໝາຍ ແລະ ລະບຽບ ການທີ່ກຳນົດ ໄວ້ ເພື່ອພັດທະນາ ຂະແໜງການກະສິກຳ ແລະ ປ່າໄມ້;

11) ລົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ເພື່ອດຳເນີນການສຳຫລວດ, ກຳນົດຈັດສັນ ແບ່ງເຂດ, ຄຸ້ມຄອງ ແລະ ນຳໃຊ້ດິນກະສິກຳ ແລະ ປ່າໄມ້, ລະບົບອ່າງຮັບນ້ຳ, ແຫຼ່ງນ້ຳ ຕາມ ການອະນຸມັດຂອງລັດຖະບານ ບົນພື້ນຖານກົດໝາຍທີ່ກຳນົດໄວ້;

12) ສ້າງແຜນການ ແລະ ແຜນງົບປະມານຂອງຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອສະເໜີຕໍ່ ລັດຖະບານ;

13) ສຶກສາອົບຮົມ, ບຳລຸງ ແລະ ກໍ່ສ້າງພະນັກງານລັດຖະກອນ ໃນຂະແໜງ ການກະສິກຳ ແລະ ປ່າໄມ້ ໃຫ້ມີຄຸນທາດທາງດ້ານການເມືອງ, ມີຄຸນສົມບັດສົມທຳປະຕິວັດຢ່າງໜັກແໜ້ນໄປຄຽງຄູ່ ກັບຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ ໃຫ້ສົມຄູ່ກັບມາດຕະຖານຕຳແໜ່ງງານ ທີ່ກຳ ນົດໄວ້;

14) ສ້າງ, ຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍຖານຂໍ້ມູນສະຖິຕິ ແລະ ຂ່າວສານ ກະສິກຳ ແລະ ປ່າໄມ້ ພ້ອມທັງໂຄສະນາເຜີຍແຜ່ອອກຢ່າງກ້ວາງຂວາງໃນທົ່ວສັງຄົມ;

15) ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ ຂອງກະຊວງກະສິກຳ ແລະ ປ່າໄມ້**

1) ຄົ້ນຄ້ວາ ແລະ ປະກາດໃຊ້ລະບຽບການ, ກຳນົດໝາຍເຕັກນິກ, ແຈ້ງການ, ຄຳສັ່ງ, ຂໍ້ຕົກລົງໃນ ການຄຸ້ມຄອງມະຫາພາກທາງດ້ານກະສິກຳ ແລະ ປ່າໄມ້;

2) ສະເໜີໂຄງປະກອບກົງຈັກການຈັດຕັ້ງຕໍ່ລັດຖະບານ, ກຳນົດຈຳນວນຕຳແໜ່ງງານ ແລະ ການ ຈັດວາງບຸກຄະລາກອນໃນລະດັບກະຊວງ ແລະ ໃນທົ່ວຂະແໜງການສາຍຕັ້ງຕາມຄວາມຮຽກຮ້ອງ ຕ້ອງການຂອງວຽກງານ ໃນແຕ່ລະໄລຍະຕາມກົດໝາຍ, ນິຕິກຳ ແລະ ລະບຽບການຂອງລັດ ຖະບານວາງອອກ; ຕົກລົງສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກບັນດາກົງຈັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງ ກະຊວງກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ລະບຽບການທີ່ວາງໄວ້. ກຳນົດ

ກົນໄກປະສານງານ ແລະ ລະບຽບແບບແຜນວິທີເຮັດວຽກ ເພື່ອຮັບໃຊ້ກົງຈັກການຈັດຕັ້ງ ຂອງກະຊວງ ແລະ ຂອງທົ່ວຂະແໜງການ ອີງໃສ່ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

3) ອອກຂໍ້ຕົກລົງແຕ່ງຕັ້ງ, ເລື່ອນຊັ້ນ, ຍ້ອງຍໍ, ປະຕິບັດວິໄນ, ສັບຊ້ອນ, ຈັດວາງ, ຄຸ້ມຄອງ ແລະ ນຳໃຊ້; ຄຳສັ່ງຍົກຍ້າຍໜ້າທີ່, ປົດຕຳແໜ່ງພະນັກງານທີ່ຢູ່ໃນຄວາມຮັບຜິດຊອບ ຂອງກະຊວງ ຕາມການແບ່ງຂັ້ນຄຸ້ມຄອງ ໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ. ຮັບປະກັນການປະຕິບັດນະໂຍບາຍຕ່າງໆ ຕໍ່ບັນດາພະນັກງານລັດຖະກອນ ທີ່ສັງກັດຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມກົດໝາຍ ແລະ ລະບຽບລັດຖະກອນທີ່ກຳນົດໄວ້;

4) ຊີ້ນຳ, ຄຸ້ມຄອງ, ກວດກາ, ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບກົດໝາຍ ຕາມຂອບເຂດສິດ ທີ່ຂະແໜງການກະສິກຳ ແລະ ປ່າໄມ້ ຮັບຜິດຊອບ;

5) ງົດການປະຕິບັດ, ລົບລ້າງ ຫລື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງອົງການຈັດຕັ້ງຂັ້ນລຸ່ມທີ່ຂື້ນກັບຂະແໜງການຕົນ. ສະເໜີຕໍ່ລັດຖະບານ ກ່ຽວກັບການປັບປຸງ, ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກນິຕິກຳ ຂອງຂະແໜງການອື່ນ ແລະ ຂອງອົງການປົກຄອງທ້ອງຖິ່ນທີ່ ຂັດກັບລະບຽບການຕ່າງໆ ຂອງຂະແໜງກະສິກຳ ແລະ ປ່າໄມ້ ຫລື ຂັດກັບລະບຽບກົດໝາຍ;

6) ພົວພັນຮ່ວມມື, ຂົນຂວາຍຍາດແຍ່ງການຊ່ວຍເຫລືອ ແລະ ການລົງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາ ແລະ ຄຸ້ມຄອງ ວຽກງານກະສິກຳ ແລະ ປ່າໄມ້ ແລະ ວຽກງານ ອື່ນ ຕາມການມອບໝາຍ ແລະ ຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

7) ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ ແລະ ປ່າໄມ້ ບົນພື້ນຖານກົດໝາຍ, ຂໍ້ກຳນົດ ແລະ ລະບຽບການທີ່ ລັດຖະບານປະກາດ ໃຊ້ ໃນແຕ່ລະໄລຍະ;

8) ເຊັນສັນຍາ, ອະນຸສັນຍາ, ສ້າງ ແລະ ເຊັນບົດບັນທຶກໃນການຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ, ມູນນິທິ ແລະ ນິຕິບຸກຄົນ ຕາມການອະນຸມັດ ຂອງລັດຖະບານ;

9) ຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານໃນຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ໄປຕາມລະບຽບການ ແລະ ກົດໝາຍທີ່ກຳນົດໄວ້;

10) ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບບຸກຄະລາກອນ

1) ກະຊວງກະສິກຳ ແລະ ປ່າໄມ້ ປະກອບດ້ວຍລັດຖະມົນຕີວ່າການ 1 ທ່ານຊຶ່ງໄດ້ຮັບການ ແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກປະທານປະເທດ ບົນພື້ນຖານການສະເໜີຂອງນາຍົກລັດຖະມົນຕີ ໂດຍຜ່ານການຮັບຮອງຈາກສະພາແຫ່ງຊາດ. ລັດຖະມົນຕີວ່າການ ເປັນສະມາຊິກລັດຖະບານ, ມີຄວາມຮັບ

ຜິດຊອບໃນການປະຕິບັດພາລະບົດບາດໜ້າທີ່ ແລະ ສິດຂອງຕົນ ຕາມດຳລັດສະບັບນີ້ ແລະ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປລາວ;

2) ກະຊວງກະສິກຳ ແລະ ປ່າໄມ້ ປະກອບມີລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ. ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍວຽກ ລັດຖະມົນຕີວ່າການໃນການນຳພາ, ອຳນວຍຄວບຄຸມວຽກງານລວມຂອງກະຊວງ, ລົງເລິກຮັບຜິດຊອບກຸ່ມວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີວ່າການ.

ກໍລະນີຕິດຂັດ ຫລື ໄປເຄື່ອນໄຫວວຽກງານທາງໄກ, ລັດຖະມົນຕີວ່າການຕ້ອງມອບສິດປະຈຳການຊົ່ວຄາວເປັນລາຍລັກອັກສອນ ໃຫ້ລັດຖະມົນຕີຊ່ວຍວ່າການແທນ, ເວລາລັດຖະມົນຕີວ່າການກັບຄືນມາ ຜູ້ປະຈຳການຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂໃຫ້ລັດຖະມົນຕີວ່າການຊາບ;

3) ກະຊວງກະສິກຳ ແລະ ປ່າໄມ້ ປະກອບດ້ວຍຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນຄົ້ນຄ້ວາ, ຫົວໜ້າກອງສົ່ງເສີມ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງຈາກນາຍົກລັດຖະມົນຕີຕາມການສະເໜີຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີ ຂອງຄະນະຈັດຕັ້ງສູນກາງພັກ. ນອກນັ້ນ ຍັງປະກອບມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນຄົ້ນຄ້ວາ, ຮອງຫົວໜ້າກອງສົ່ງເສີມ, ການນຳຂັ້ນພະແນກ, ກອງວິຊາການ, ສູນ, ສະຖານີ, ໂຮງຮຽນ, ໂຄງການ, ໜ່ວຍງານ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງ ຈາກລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້.

ສຳລັບ ຫົວໜ້າ ແລະ ຮອງຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ, ຫົວໜ້າ ແລະ ຮອງຫົວໜ້າ ຂະແໜງການ ທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ; ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ກ່ອນຈະມີການແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍ ຕ້ອງໄດ້ມີການລົມທຶບເຫັນດີເປັນເອກະພາບກັບອົງການປົກຄອງທ້ອງຖິ່ນ.

ມາດຕາ 6. ໂຄງປະກອບກົງຈັກ

ກ. ຢູ່ຂັ້ນສູນກາງປະກອບມີ:

1. ຫ້ອງການ;
2. ກົມ ຈັດຕັ້ງ ແລະ ພະນັກງານ;
3. ກົມ ກວດກາ;
4. ກົມ ແຜນການ;
5. ກົມ ປູກຝັງ;
6. ກົມ ລ້ຽງສັດ ແລະ ການປະມົງ;
7. ກົມ ປ່າໄມ້;
8. ກົມ ຊົນລະປະທານ;
9. ສະຖາບັນ ຄົ້ນຄ້ວາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້;
10. ກອງ ສົ່ງເສີມກະສິກຳ ແລະ ປ່າໄມ້

ນອກຈາກນັ້ນ ຍັງມີ ສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້ ໂດຍແມ່ນລັດຖະມົນຕີວ່າການເປັນປະທານ ແລະ ມອບໃຫ້ສະຖາບັນຄົ້ນຄ້ວາວິທະຍາສາດເຕັກນິກກະສິກຳ

ແລະ ປ່າໄມ້ ຮັບຜິດຊອບ ເປັນກອງເລຂາຊ່ວຍຕິດຕາມ, ຊຸກຍູ້, ປະສານງານ, ກວດກາ, ປະເມີນຜົນ, ຊ່ວຍກະກຽມກອງປະຊຸມຕາມວາລະວາງໄວ້ ແລະ ປະຕິບັດວຽກກ່ຽວຂ້ອງອື່ນໆຕາມການມອບໝາຍ ຂອງທ່ານປະທານ.

ພາຍໃນຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ, ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ໃຫ້ມີພະແນກການ, ກອງວິຊາການ, ສູນ, ສະຖານີ, ໂຮງຮຽນວິຊາຊີບ, ໜ່ວຍງານ ແລະ ໂຄງການວິຊາສະເພາະຕາມຄວາມຮຽກຮ້ອງຕ້ອງການ ທີ່ຈຳເປັນຂອງວຽກງານ.

ຂ. ຢູ່ຂັ້ນທ້ອງຖິ່ນມີພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ເທດສະບານ.

## ໝວດທີ IV
## ແບບແຜນວິທີເຮັດວຽກ

ມາດຕາ 7. ກະຊວງກະສິກຳ ແລະ ປ່າໄມ້ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການລວມດັ່ງນີ້:

1) ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບກັບການປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນພ້ອມທັງມອບສິດ ແລະ ຄວາມຮັບຜິດຊອບໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ;
2) ການເຄື່ອນໄຫວ ແລະ ດຳເນີນວຽກງານຂອງກະຊວງ ຕ້ອງຫັນເອົາແນວທາງຍຸດທະສາດ, ແຜນນະໂຍບາຍ, ນະໂຍບາຍລວມຂອງສູນກາງພັກ ແລະ ລັດຖະບານ ໃນດ້ານກະສິກຳ ແລະ ປ່າໄມ້ ແລະ ວຽກງານບູລິມະສິດອື່ນໆ ຕາມກຳນົດໄວ້ໃນໜ້າທີ່ ມາເປັນຍຸດທະສາດ, ແຜນງານ, ແຜນການ ແລະໂຄງການລະອຽດໃນແຕ່ລະໄລຍະ ໂດຍອີງໃສ່ງົບປະມານພາຍໃນ, ທຶນຊ່ວຍເຫລືອລ້າ, ທຶນກູ້ຢືມຈາກຕ່າງປະເທດ ແລະ ຈາກແຫລ່ງທຶນຕ່າງໆ ຕາມລະບຽບກົດໝາຍທີ່ກຳນົດໄວ້;
3) ດຳເນີນການຄຸ້ມຄອງມະຫາພາກຕາມຂະແໜງການສາຍຕັ້ງຢ່າງລວມສູນ ແລະ ເຂັ້ມງວດ. ປະຕິບັດການຫັນເອົາພະນັກງານລົງທ້ອງຖິ່ນຮາກຖານເປັນປົກກະຕິ, ກວດກາ-ກວດການ, ປະເມີນຜົນວຽກງານ ໃນທົ່ວຂະແໜງກະສິກຳ ແລະ ປ່າໄມ້ ຕະຫລອດຮອດທົ່ວໜ່ວຍວິສາຫະກິດ-ທຸລະກິດ ທີ່ກ່ຽວຂ້ອງກັບວຽກງານ ກະສິກຳ ແລະ ປ່າໄມ້ ເພື່ອແນໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍ ດ້ານກະສິກຳ ແລະ ປ່າໄມ້ ຂອງພັກ ແລະ ບັນດາລະບຽບກົດໝາຍຂອງລັດ ໃຫ້ໄດ້ຮັບຜົນດີ;
4) ບັນດາເອກະສານນິຕິກຳ ແລະ ກຳນົດໝາຍເຕັກນິກ, ຜົນສຳເລັດດ້ານການຄົ້ນຄ້ວາທົດລອງກ່ຽວກັບກະສິກຳ ແລະ ປ່າໄມ້ ຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ຮັບຮອງຈາກສະພາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້ເສັຽກ່ອນ ຈຶ່ງນຳສະເໜີໃຫ້ລັດຖະມົນຕີອະນຸມັດ;
5) ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳອາທິດ, ປະຈຳເດືອນ, ປະຈຳ 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆເພື່ອຊຸກຍູ້ຕິດຕາມ ແລະ ກວດກາ ປະເມີນຜົນ, ກຳສະພາບລວມ ແລະ ສະເພາະດ້ານຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ລັດຖະບານ;

6) ພັດທະນາຖານຂໍ້ມູນ, ສະຖິຕິ ແລະ ຂ່າວສານ ດ້ານກະສິກຳ ແລະ ປ່າໄມ້ ເພື່ອເປັນເຄື່ອງມືຊ່ວຍກິງຈັກການຈັດຕັ້ງ ແລະ ເປັນບ່ອນອີງໃນການຕັດສິນບັນຫາຕ່າງໆຂອງຂະແໜງການ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8.** ງົບປະມານ ແລະ ກາປະທັບ

ກະຊວງກະສິກຳ ແລະ ປ່າໄມ້ ມີງົບປະມານ ແລະ ກາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9.** ການຜັນຂະຫຍາຍ

ມອບໃຫ້ລັດຖະມົນຕີວ່າການກະຊວງ ກະສິກຳ ແລະປ່າໄມ້ ເປັນຜູ້ກຳນົດ ກ່ຽວກັບພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງຫ້ອງການ, ບັນດາກົມ, ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄ້ວາວິທະຍາສາດເຕັກນິກກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫລວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ເທດສະບານ.

**ມາດຕາ 10.** ການຈັດຕັ້ງປະຕິບັດ

ກະຊວງກະສິກຳ ແລະ ປ່າໄມ້, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11.** ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 89/ນຍ, ລົງວັນທີ 22 ມິຖຸນາ 1999.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

ບົວສອນ ບຸບຜາວັນ